ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 949 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 23 ເມສາ 2021

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ;

- ບັນດາເຈົ້າໜ້າທີ່ງກ່ຽວຂ້ອງ;
- ຜູ້ປະກອບການຂົນສົ່ງໂດຍສານ ແລະ ສິນຄ້າ.

ເລື່ອງ: ການຂົນສົ່ງໂດຍສານ ແລະ ສິນຄ້າ ຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 295/ນຍ, ລົງວັນທີ 04/09/2017;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21/04/2021;
- ອີງຕາມ ການຕົກລົງເຫັນດີ ລະຫວ່າງ ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ການແກ້ໄຂການລະບາດຂອງພະຍາດໂຄວິດ-19 ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ, ຄັ້ງວັນທີ 23/04/2021.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21/04/2021 ໃຫ້ການຂົນສົ່ງໂດຍສານ ແລະ ສິນຄ້າສາມາດສືບຕໍ່ບໍລິການສັງຄົມ ທີ່ມີມາດຕະການປ້ອງກັນການລະບາດຂອງເຊື້ອພະຍາດໂຄວິດ-19 ຢ່າງເຂັ້ມງວດ, ກະຊວງໂຍທາທິການ ແລະ ຂົນສົ່ງ ອອກແຈ້ງການດັ່ງນີ້:

1. ໃຫ້ຢຸດຕິຊົ່ວຄາວ ການຂົນສົ່ງໂດຍສານທາງນ້ຳ ລະຫວ່າງ ນະຄອນຫຼວງວຽງຈັນ ຫາ ບັນດາແຂວງ, ແຂວງ ຫາ ນະຄອນຫຼວງວຽງຈັນ ແລະ ລະຫວ່າງ ແຂວງ ຫາ ແຂວງ;
2. ໃຫ້ຢຸດຕິຊົ່ວຄາວ ການຂົນສົ່ງໂດຍສານທາງອາກາດ ພາຍໃນປະເທດທຸກເສັ້ນບິນ, ຍົກເວັ້ນຖ້ຽວບິນພິເສດທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ໄປຮັບຜູ້ໂດຍສານທີ່ມີພູມລຳເນົາ ເຮັດວຽກປະຈຳຢູ່ນະຄອນຫຼວງວຽງຈັນ;

3. ໃຫ້ຢຸດຕິຊົ່ວຄາວ ການຂົນສົ່ງໂດຍສານທາງບົກ ລະຫວ່າງ ນະຄອນຫຼວງວຽງຈັນ ຫາ ບັນດາແຂວງ, ແຂວງ ຫາ ນະຄອນຫຼວງວຽງຈັນ ແລະ ລະຫວ່າງ ແຂວງ ຫາ ແຂວງ, ແລະ ການຂົນສົ່ງໂດຍສານພາຍໃນແຂວງ ແລະ ພາຍໃນນະຄອນຫຼວງວຽງຈັນ, ຊຶ່ງລວມມີ ລົດເມ, ລົດຕູ້, ລົດຕັກຊີ, ລົດສອງແຖວ, ລົດຕຸກໆ, ລົດຈຳໂບ້ ແລະ ລົດຈັກຮັບຈ້າງ;
4. ໃຫ້ຢຸດຕິຊົ່ວຄາວ ການຂົນສົ່ງໂດຍສານ ທາງລົດໄຟ ລາວ-ໄທ, ສຳລັບການຂົນສົ່ງສິນຄ້າ ແມ່ນຍັງອະນຸຍາດໃຫ້ສືບຕໍ່ບໍລິການໄດ້ ໂດຍໃຫ້ປະຕິບັດມາດຕະການ ທີ່ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ວາງອອກ ແລະ ບັນດາມາດຕະການຂອງທັງສອງຝ່າຍ ຕົກລົງເປັນເອກະພາບກັນ ຢ່າງເຂັ້ມງວດ;
5. ອະນຸຍາດໃຫ້ມີການຂົນສົ່ງສິນຄ້າພາຍໃນປະເທດ, ລະຫວ່າງປະເທດ, ຜ່ານແດນ ແລະ ນຳເຂົ້າເພື່ອສົ່ງອອກ ຊຶ່ງໃຫ້ປະຕິບັດມາດຕະການດັ່ງນີ້:

   5.1 ການຂົນສົ່ງສິນຄ້າພາຍໃນປະເທດ

   ການຂົນສົ່ງສິນຄ້າພາຍໃນປະເທດ ທີ່ເຄື່ອນຍ້າຍຢູ່ພາຍໃນປະເທດຜ່ານບັນດາ ເມືອງ, ແຂວງ ແລະ ນະຄອນຫຼວງວຽງຈັນ ແມ່ນສາມາດຂົນສົ່ງສິນຄ້າ ແລະ ອາຫານໄປຮອດປາຍທາງ ຫຼື ລູກຄ້າໄດ້ຢ່າງເປັນປົກກະຕິ;

   5.2 ການຂົນສົ່ງສິນຄ້າ ຂາເຂົ້າ, ຂາອອກ, ຜ່ານແດນ ແລະ ນຳເຂົ້າເພື່ອສົ່ງອອກ

   ກ. ສຳລັບລົດຂົນສົ່ງສິນຄ້າປະເພດ ອຸປະໂພກ, ບໍລິໂພກ ແລະ ນຳເຂົ້າທົ່ວໄປ ທີ່ເຂົ້າມາດິນແດນຂອງ ສປປ ລາວ ຕ້ອງນຳສົ່ງສິນຄ້າໄປລົງຈຸດຖ່າຍຖ່າຍທີ່ເຈົ້າໜ້າທີ່ກຳນົດຢູ່ດ່ານຊາຍແດນເບື້ອງລາວ, ພາຍຫຼັງເອົາສິນຄ້າລົງແລ້ວ ໃຫ້ກັບຄືນທັນທີ;

   ຂ. ສຳລັບລົດຂົນສົ່ງສິນຄ້າປະເພດນ້ຳມັນເຊື້ອໄຟ, ສິນຄ້າທາດແຫຼວ, ອາຍແກັສ, ຢາງປູທາງ, ສິນຄ້າອັນຕະລາຍ, ສິນຄ້າກະສິກຳປະເພດບູດເນົ່າໄວ (ສັດທີ່ມີຊີວິດ, ຊີ້ນແຊ່ແຂງ, ໝາກໄມ້ສົດ ແລະ ອື່ນໆ), ວັດຖຸດິບສຳລັບການຜະລິດເພື່ອສົ່ງອອກຄືນ ທີ່ໄດ້ຮັບການຍົກເວັ້ນ ພາສີອາກອນ ຕາມນະໂຍບາຍຂອງລັດຖະບານ ແລະ ວັດຖຸອຸປະກອນ, ເຄື່ອງຈັກຜະລິດ ເພື່ອມາຮັບໃຊ້ໂຄງການຂອງລັດຖະບານເຊັ່ນ: ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ເຂື່ອນໄຟຟ້າ, ເຄື່ອງຊ່ວຍເຫຼືອ ທາງດ້ານອຸປະກອນການແພດ ເພື່ອຮັບມືກັບການລະບາດ ພະຍາດ ແລະ ໄພພິບັດ ທີ່ບໍ່ສາມາດຖ່າຍຖ່າຍ ຫຼື ມີຄວາມສ່ຽງດ້ານຄວາມປອດໄພໃນການຖ່າຍຖ່າຍ ແມ່ນອະນຸຍາດໃຫ້ລົດຂົນສົ່ງຂອງຕ່າງປະເທດເຂົ້າມາຮອດປາຍທາງໄດ້, ພາຍຫຼັງເອົາສິນຄ້າລົງແລ້ວໃຫ້ກັບຄືນທັນທີ. ການຂົນສົ່ງສິນຄ້າປະເພດດັ່ງກ່າວ ຕ້ອງໄດ້ເຮັດໜັງສືຄ້ຳປະກັນທາງດ້ານຄວາມປອດໄພຈາກພະຍາດໂຄວິດ-19 ກັບຄະນະສະເພາະກິດປະຈຳດ່ານສາກົນ; ຊຶ່ງປະກອບມີ ການກຳນົດເສັ້ນທາງຂົນສົ່ງ, ຕົ້ນທາງ-ປາຍທາງ ຂົນສົ່ງສິນຄ້າ, ມີໜັງສືຢັ້ງຢືນຂອງສິນຄ້າ ຫຼື ຕົວແທນຢູ່ ສປປ ລາວ ຫຼື ເຈົ້າຂອງໂຄງການ; ລະບຸມາດຕະການ ໃນການກິນ, ຢູ່, ພັກ-ເຊົາ ຂອງຄົນຂັບລົດ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19;

ຄ. ລົດຂົນສົ່ງສິນຄ້າຜ່ານດິນແດນຂອງ ສປປ ລາວ ເພື່ອຈະໄປປະເທດທີ່ສາມ ຕ້ອງມາຄ່ຽນຖ່າຍສິນຄ້າໃສ່ລົດຂົນສົ່ງຂອງລາວຢູ່ຈຸດຄ່ຽນຖ່າຍຂາເຂົ້າທີ່ເຈົ້າໜ້າທີ່ກຳນົດ ແລ້ວໃຫ້ລົດຂົນສົ່ງຂອງລາວທີ່ເປັນຄູ່ສັນຍາຂົນສົ່ງຕໍ່ໄປດ່ານຊາຍແດນຂາອອກ;

ງ. ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19, ເຫັນດີອະນຸຍາດໃຫ້ລົດຂົນສົ່ງສິນຄ້າ ແລະ ຕູ້ຄອນເທນເນີເປົ່າຂອງຕ່າງປະເທດທີ່ເປັນຄູ່ສັນຍາກັບບໍລິສັດຂົນສົ່ງຂອງ ສປປ ລາວ ສາມາດເຂົ້າມາຮັບເອົາສິນຄ້າ ຢູ່ ສປປ ລາວ ເພື່ອສົ່ງອອກໄດ້ ໂດຍຕ້ອງໄດ້ຮັບອະນຸຍາດ ຈາກພາກສ່ວນກ່ຽວຂ້ອງ.

5.3 ຜູ້ປະກອບການ ແລະ ຄົນຂັບລົດ

5.3.1 ສຳລັບຜູ້ປະກອບການຂົນສົ່ງ:

- ຜູ້ປະກອບການຂົນສົ່ງ ຕ້ອງທຳຄວາມສະອາດສະຖານທີ່ຂອງບໍລິສັດ ແລະ ເພີ່ມຄວາມຖີ່ໃນການທຳຄວາມສະອາດເຊັ່ນ: ສີດຢາອະເຊື້ອພາຍໃນຫ້ອງຂັບລົດ ແລະ ຕູ້ບັນຈຸສິນຄ້າ ກ່ອນການບັນຈຸສິນຄ້າໃສ່ລົດແຕ່ລະຄັ້ງ, ພ້ອມມີບັນທຶກການກວດກາສະພາບທາງດ້ານຮ່າງກາຍຂອງຄົນຂັບລົດປະຈຳວັນ ດ້ວຍເຄື່ອງກວດອຸນຫະພູມຮ່າງກາຍ. ມີມາດຕະການໃນການແກ້ໄຂເຫດການສຸກເສີນເຊັ່ນ: ກໍລະນີທີ່ພົບພະນັກງານຂອງຕົນມີອຸນຫະພູມ ສູງເກີນ 37,5 ອົງສາ ຕ້ອງປ່ຽນຄົນຂັບລົດ ແລະ ໃຫ້ປະສານຫາພະນັກງານສາທາລະນະສຸກ ເພື່ອນຳສົ່ງໄປສະຖານທີ່ບໍລິການສາທາລະນະສຸກຢູ່ໃກ້, ພ້ອມທັງແນະນຳໃຫ້ຜູ້ກ່ຽວໃສ່ຜ້າປິດປາກ-ດັງ ແລະ ແຍກປ່ຽວຈາກຄົນອື່ນ;
- ເອົາໃຈໃສ່ແນະນຳພະນັກງານທຸກຄົນໄປສັກວັກຊີນໂຄວິດ-19, ລ້າງມືດ້ວຍສະບູ, ເຫຼົ້າ 70% ຂຶ້ນໄປ, ເຈວ ຫຼື ຢາຂ້າເຊື້ອເປັນປົກກະຕິ ແລະ ໃຫ້ຕິດຕັ້ງຈຸດລ້າງມືໃຫ້ລູກຄ້າ, ຄົນຂັບລົດ, ລວມທັງພະນັກງານຕາມຈຸດຕ່າງໆຂອງສຳນັກງານທີ່ມີຄວາມສະດວກ ແລະ ປອດໂປ່ງ.

5.3.2 ສຳລັບຄົນຂັບລົດຂົນສົ່ງ:

- ຕ້ອງຖືໃບຂັບຂີ່, ບັດປະຈຳຕົວ ແລະ ເອກະສານປະຈຳລົດຕະຫຼອດເວລາ ເພື່ອອຳນວຍຄວາມສະດວກ ໃນການກວດກາຂອງເຈົ້າໜ້າທີ່ຕາມເສັ້ນທາງ;
- ຕ້ອງໃສ່ຜ້າປິດປາກ-ດັງ ຕະຫຼອດເວລາ ໃນເວລາເຮັດວຽກ ຫຼື ເດີນທາງ;
- ບັນທຶກການເດີນທາງ (Timeline) ແລະ ອຸນຫະພູມຂອງຕົນເອງ ໃນແຕ່ລະວັນ;
- ຕ້ອງໝັ່ນລ້າງມືດ້ວຍນ້ຳສະອາດ ແລະ ສະບູ ຫຼື ເຫຼົ້າ 70% ຂຶ້ນໄປ;
- ສຳລັບລົດຂົນສົ່ງສິນຄ້າຕ່າງປະເທດ ແມ່ນອະນຸຍາດໃຫ້ມີຄົນຂັບລົດພຽງແຕ່ 1 ຄົນ ຕໍ່ 1 ຄັນ ໂດຍບໍ່ອະນຸຍາດໃຫ້ມີຜູ້ຕິດຕາມ ແລະ ຕ້ອງມີໜັງສືຢັ້ງຢືນຜົນຂອງການກວດຫາເຊື້ອພະຍາດໂຄວິດ-19 ເປັນລົບ ຢ່າງໜ້ອຍ 72 ຊົ່ວໂມງ ແລະ ສາມາດນຳໃຊ້ໄດ້ພາຍໃນ 7 ວັນ, ຖ້າເກີນຜູ້ກ່ຽວຈະຕ້ອງໄດ້ກວດຄືນອີກ.

6. ໃຫ້ບັນດາຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງເຊື້ອພະຍາດໂຄວິດ-19 ຂັ້ນນະຄອນຫຼວງວຽງຈັນ, ຂັ້ນແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ

ວຽງຈັນ/ແຂວງ ແລະ ຜູ້ປະກອບການຂົນສົ່ງ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເປັນເອກະພາບທົ່ວປະເທດ;

7. ນອກຈາກແຈ້ງການສະບັບນີ້ແລ້ວ ໃຫ້ປະຕິບັດຕາມມາດຕະການຂອງຄະນະສະເພາະກິດ ຂັ້ນນະຄອນຫຼວງວຽງຈັນ ແລະ ຂັ້ນແຂວງວາງອອກຢ່າງເຂັ້ມງວດ;
8. ແຈ້ງການສະບັບນີ້ປ່ຽນແທນ ແຈ້ງການສະບັບເລກທີ 00283/ຍທຂ, ລົງວັນທີ 24 ເມສາ 2020 ກ່ຽວກັບ ການຂົນສົ່ງສິນຄ້າພາຍໃນ, ເຂົ້າ-ອອກ ລະຫວ່າງປະເທດ ແລະ ຜ່ານແດນຢູ່ໃນ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະແກ້ໄຂການລະບາດຂອງພະຍາດໂຄວິດ-19 ແລະ ຄຳແນະນຳເພີ່ມເຕີມ ສະບັບເລກທີ 2715/ຍທຂ, ລົງວັນທີ 08 ກຸມພາ 2021 ກ່ຽວກັບການຈັດຕັ້ງປະຕິບັດການຂົນສົ່ງສິນຄ້າລະຫວ່າງປະເທດ ແລະ ຜ່ານແດນ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະແກ້ໄຂການລະບາດຂອງພະຍາດໂຄວິດ-19 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີການປ່ຽນແປງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຮັກສາການແທນ **ລັດຖະມົນຕີ**

ລັນ ແສງອາພອນ